ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

<u>ກະຊວງການຄ້າ</u>
<u>ແລະ ພົວພັນເສດຖະກິດກັບຕ່າງປະເທດ</u>
<u>ແຫ່ງ ສ.ປ.ປ.ລ.</u>

ວຽງຈັນ, ວັນທີ **22** ເດືອນ ທັນວາ 1988

ທ່ານ: ເຈິງໂທບິນ
ລັດຖະມົນຕີ ກະຊວງເສດຖະກິດ ແລະ
ການຄ້າຕໍ່ພາຍນອກແຫ່ງ ສ.ປ.ຈີນ.
<u>ທີ່</u> <u>ປັກກິ່ງ</u>.

ຮຽນ: ທ່ານລັດຖະມົນຕີ.

ຂ້າພະເຈົ້າ ຮູ້ສຶກເປັນກຽດທີ່ໄດ້ຕາງໜ້າ ກະຊວງການຄ້າ ແລະ ພົວພັນເສດຖະກິດກັບຕ່າງປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໄດ້ຮັບຮູ້ວ່າ, ເພື່ອຂະຫຍາຍການພົວພັນອັນດີແບບບ້ານໃກ້ເຮືອນຄຽງ ລະຫວ່າງປະຊາຊົນສອງປະເທດລາວ-ຈີນ ແລະ ຊຸກຍູ້ເສດຖະກິດໃນທ້ອງຖິ່ນຊາຍແດນລະຫວ່າງສອງປະເທດ ໃຫ້ຂະຫຍາຍຕົວ, ສອງຝ່າຍລາວ-ຈີນ ໂດຍຜ່ານການປຶກສາຫາລືມິດຕະພາບ, ໄດ້ບັນລຸຂໍ້ຕົກລົງກ່ຽວກັບບັນຫາການດຳເນີນການຄ້າຊາຍແດນລາວ-ຈີນ ດັ່ງລຸ່ມນີ້:

1. ການຄ້າຊາຍແດນຂອງສອງຝ່າຍ ຄວນດຳເນີນບົນຫລັກການ ສະເໝີພາບ ຕ່າງຝ່າຍຕ່າງມີຜົນ ແລະ ດຸນດ່ຽງກັນ. ອີງຕາມຄວາມຕ້ອງການ ແລະ ຄວາມອາດສາມາດຂອງສອງຝ່າຍ, ໃຫ້ບັນດາແຂວງຊາຍແດນ ທີ່ມີດິນແດນເຈືອມຕໍ່ກັນລະຫວ່າງສອງປະເທດ (ແຂວງຜົ້ງສາລີ, ຫລວງນ້ຳທາ, ອຸດົມໄຊລາວ ແລະ ແຂວງ ຢູນນານຈີນ) ຕ່າງຝ່າຍມອບໝາຍໃຫ້ບໍລິສັດການຄ້າຂອງຕົນ ຮັບຜິດຊອບດຳເນີນງານ.

2. ອີງການຄ້າດັ່ງກ່າວນັ້ນ ຈະເຊັນຂໍ້ຜູກພັນແລກປ່ຽນສິນຄ້ານຳກັນ ພາຍຫຼັງທີ່ໄດ້ດຳເນີນການປຶກສາຫາລື ແລະ ເປັນເອກະພາບກັນແລ້ວ ກ່ຽວກັບປະເພດລະອຽດ, ຈຳນວນ ແລະ ອື່ນໆຂອງສິນຄ້າ ທີ່ຈະແລກປ່ຽນກັນ. ຍອດປະລິມານລວມຂອງສິນຄ້າ ທີ່ຈະແລກປ່ຽນກັນໃນແຕ່ລະປີນັ້ນ ແມ່ນອີງໃສ່ການດຸນດ່ຽງເປັນຫລັກການ.

ລາຄາຂອງສິນຄ້າທີ່ຈະແລກປ່ຽນກັນນັ້ນ ມອບໃຫ້ບໍລິສັດການຄ້າຂອງສອງຝ່າຍປຶກສາຫາລື ແລະ ຕົກລົງນຳກັນ, ເອົາເງິນຕາທີ່ສອງຝ່າຍໄດ້ຕົກລົງ ແລະ ເຫັນດີນຳກັນເພື່ອຄິດໄລ່ ແລະ ສະສາງບັນຊີ.

3. ດ່ານຜ່ານໃນການປະຕິບັດການແລກປ່ຽນສິນຄ້າລະຫວ່າງ ບໍລິສັດການຄ້າຂອງສອງຝ່າຽ, ຝ່າຽລາວແມ່ນເອົາ ປາກຄາ, ບໍ່ເຕັນ, ບ້ານຊາຍ; ຝ່າຽຈີນແມ່ນເອົາ ມານຈວງ, ຊາງຢຸງ, ເມືອງມານຂອງເມືອງຫລ້າ.

ຖ້າມີຄວາມຈຳເປັນທີ່ຈະຕ້ອງປ່ຽນແປງດ່ານຜ່ານ, ມອບໃຫ້ອຳນາດການປົກຄອງທ້ອງຖິ່ນຂອງສອງຝ່າຽ ປຶກສາຫາລື, ພາຽຫລັງທີ່ເປັນເອກະພາບກັນແລ້ວ ລາຽງານລັດຖະບານຂອງສອງປະເທດ ອະນຸມັດ, ຫລັງຈາກນັ້ນຈຶ່ງປະຕິບັດ.

4. ເພື່ອດຳເນີນການສະສາງບັນຊີການຄ້າຊາຽແດນ, ສາຂາທະນາຄານແຫ່ງລັດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາຂາທະນາຄານຈີນທີ່ ກຸນມິງ ແຫ່ງສາທາລະນະລັດ ປະຊາຊົນຈີນ, ຕ່າງຝ່າຽຕ່າງເປີດບັນຊີສະເພາະໃຫ້ກັນ, ພ້ອມທັງປຶກສາຫາລືບັນດາຫລັກການລະອຽດ ທາງດ້ານເຕັກນິກ.

5. ຈົດຫມາຽແລກປ່ຽນສະບັບນີ້ ມີຜົນສັກສິດ ແລະ ບັງຄັບໃຊ້ ນັບແຕ່ມື້ແລກປ່ຽນຈົດຫມາຽເປັນຕົ້ນໄປ. ກະຊວງການຄ້າແລະພົວພັນ ເສດຖະກິດກັບຕ່າງປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງເສດຖະກິດ ແລະ ການຄ້າຕໍ່ຝ່າຽນອກ ແຫ່ງສາທາລະນະລັດ ປະຊາຊົນຈີນ ຈະເປັນຜູ້ກວດກາການປະຕິບັດຈົດຫມາຽແລກປ່ຽນສະບັບນີ້.

ຂໍສະແດງຄວາມນັບຖືຢ່າງສູງ.

ເພົ້າ ບຸນນະພົນ
ລັດຖະມົນຕີ ກະຊວງການຄ້າແລະພົວພັນ
ເສດຖະກິດ ກັບຕ່າງປະເທດ ແຫ່ງ ສປປລ,